ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
----------000----------

ເລກທີ 001 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2023

ໃບອະນຸຍາດ

ອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 79/ສພຊ ລົງວັນທີ 13 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ ລົງວັນທີ 5 ເມສາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກ ສະບັບເລກທີ 05/ຄຄຊ ລົງວັນທີ 29 ເມສາ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນກູ້, ສະບັບເລກທີ 20/ຄຄຊ ລົງວັນທີ 23 ມິຖຸນາ 2021;
- ອີງຕາມ ໜັງສືສະເໜີຂໍອອກຈຳໜ່າຍຮຸ້ນກູ້, ສະບັບເລກທີ 0380/ສ.ວ.ນ ລົງວັນທີ 11 ເມສາ 2023.

ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ອະນຸຍາດ:

ມາດຕາ 1: ໃຫ້ບໍລິສັດ (ຊື່ເປັນພາສາລາວ): ..... **ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ** .....
(ຊື່ເປັນພາສາສາກົນ): ..... **SOUVANNY HOME CENTER PUBLIC COMPANY** .....
ທະບຽນວິສາຫະກິດເລກທີ: ..... **0036/ຈໜວ** .....
ທຶນຈົດທະບຽນ: ..... **330.000.000.000 ກີບ** .....
ທີ່ຕັ້ງສຳນັກງານ: ບ້ານ ..... **ໂພນຕ້ອງສະຫວາດ** ....., ເມືອງ ..... **ຈັນທະບຸລີ** .....,
ແຂວງ ..... **ນະຄອນຫຼວງວຽງຈັນ** .....,
ອອກຮຸ້ນປະເພດ: ..... **ຮຸ້ນກູ້ໃນວົງຈຳກັດ** ..... ລະຫັດ: L A 8 0 0 0 0 1 1 5 D 6
ຈຳນວນຮຸ້ນກູ້ທີ່ອອກ: ..... **60 ໜ່ວຍ** .....
ມູນຄ່າກຳນົດ: ..... **50.000 ໂດລາ/ໜ່ວຍ** .....
ລາຄາຂາຍ: ..... **50.000 ໂດລາ/ໜ່ວຍ** .....
ມູນຄ່າທັງໝົດ: ..... **3.000.000 ໂດລາ** .....

ມາດຕາ 2: ພາຍຫຼັງອອກຈຳໜ່າຍຮຸ້ນແລ້ວ **ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ** ຕ້ອງປະຕິບັດຕາມ ລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

ມາດຕາ 3: ໃບອະນຸຍາດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ຜ່ອງຈັນດາ ແສງສຸລິວົງ

ໝາຍເຫດ:

1. ໃບອະນຸຍາດອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດສະບັບນີ້ ມີຜົນນຳໃຊ້ສະເພາະການອອກຈຳໜ່າຍຮຸ້ນກູ້ຄັ້ງນີ້ ເທົ່ານັ້ນ.
2. ບໍລິສັດທີ່ໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ບໍ່ມີສິດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ໃບອະນຸຍາດສະບັບນີ້ໄດ້.
3. ພາຍຫຼັງບໍລິສັດໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຕ້ອງປະຕິບັດຕາມລະບຽບ ແລະ ຂັ້ນຕອນການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດທີ່ໄດ້ກຳນົດໄວ້.
4. ທຸກການປັບປຸງ, ປ່ຽນແປງ ຂໍ້ມູນທີ່ໄດ້ກຳນົດໄວ້ໃນໃບອະນຸຍາດສະບັບນີ້ ຕ້ອງໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ.